ປົດຂ່າວ

ສະຖານທູດອົດສະຕຣາລີ

ນະຄອນຫຼວງວຽງຈັນ

12 ສິງຫາ 2013

**ສະຖານທູດອົດສະຕຣາລີ ເປີດຮັບ ບົດສະເໜີໂຄງການຊ່ວຍເຫຼືອໂດຍກົງ**

ໂຄງການຊ່ວຍເຫຼືອໂດຍກົງ ຫຼື Direct Aid Program – DAP ສົກປີ 2013-2014 ມາຮອດປະຈຸບັນ ແມ່ນ ໄດ້ເປີດຮັບບົດສະເໜີໂຄງການ. ໂຄງການຊ່ວຍເຫຼືອນີ້ ແມ່ນ ໂຄງການຂະໜາດນ້ອຍ ແນໃສ່ ຊ່ວຍເຫຼືອຄວາມຈຳເປັນດ້ານ ມະນຸດສະທຳ. ສຳລັບ ປີ 2013-2014 ໂຄງການນີ້ ສຸມໃສ່ ໂຄງການເພື່ອການພັດທະນາ ທີ່ຍືນຍົງ ດ້ານ ສາທາລະນະສຸກ, ການສຶກສາ, ບົດບາດຍິງຊາຍ ແລະ ສ້າງຄວາມເຂັ້ມແຂງ ແກ່ແມ່ຍິງ, ແກ້ໄຂ ຄວາມທຸກຍາກ ແລະ ສະໜັບສະໜູນ ກຸ່ມຄົນທີ່ດ້ອຍໂອກາດ.

ຈຸດປະສົງສະເພາະ ຂອງໂຄງການນີ້ແມ່ນ ແນໃສ່ ສະໜັບສະໜູນ ບັນດາໂຄງການ ທີ່ເວົ້າເຖິງ ການພັດທະນາດ້ານ ຄວາມຈຳເປັນ ພື້ນຖານ ແລະ ລຸດຜ່ອນຄວາມທຸກຍາກ. ໂຄງການ ທີ່ຈັດຕັ້ງ ປະຕິບັດຢູ່ຕາມທ້ອງຖິ່ນ ຮ່ວມກັບທຳມະຊາດ ແມ່ນ ສະໜັບ ສະໜູນໃຫ້ຍື່ນຂໍໂຄງການ. ສະຖານທູດອົດສະຕຣາລີ ຍິນດີ ຂໍເຊີນ ບັນດາໂຄງການ ທີ່ ຄົນໃນທ້ອງຖິ່ນຈະໄດ້ຮັບປະໂຫຍດ ຈາກໂຄງການ ທົ່ວເຖິງ ໂດຍຜ່ານ ການອອກແບບ ແລະ ການບໍລິຫານໂຄງການນຳກັນ.

ໃນປີຜ່ານໆມາ ໂຄງການນີ້ ໄດ້ສະໜອງງົບປະມານ ໃຫ້ຫຼາຍໂຄງການ ທີ່ກ່ຽວກັບ ການພັດທະນາສັງຄົມ ແລະ ທ້ອງຖິ່ນ ເຊັ່ນ ສາທາລະນະສຸກ, ການສຶກສາ ແລະ ກະສິກຳ ໃນຫຼາຍແຂວງທົ່ວປະເທດລາວ. ໃນສົກປີ 2012-2013, ໂຄງການນີ້ ໄດ້ສ້າງ ສະໜັບສະໜູນ 11 ໂຄງການ ເຊັ່ນ:

- ແປງໂຮງຮຽນປະຖົມ ບ້ານ ຫ້ອມເໜືອ ແລະ ບ້ານນາໄຫ ນະຄອນຫຼວງວຽງຈັນ
- ສະໜອງອຸປະກອນການແພດຈຳເປັນຫຼາຍຢ່າງ ໃຫ້ ໂຮງໝໍເມືອງປາກລາຍ ແຂວງໄຊຍະບູລີ
- ສະໜອງອຸປະກອນການແພດ ໃຫ້ໂຮງໝໍເມືອງຄຳ ແລະ ໂຮງໝໍ ແຂວງໄຊຍະບູລີ
- ສະໜອງປື້ມ ແລະ ອຸປະກອນການຮຽນ ໃຫ້ ເດັກນ້ອຍ ບ້ານໂນນຄໍ້ໃຕ້ ນະຄອນຫຼວງວຽງຈັນ
- ຊື້ເຄື່ອງຊ່ວຍຫາຍໃຈທຽມ ໃຫ້ຫ້ອງມໍລະສຸມ ຂອງໂຮງໝໍແຂວງ ບໍລິຄຳໄຊ
- ສ້າງໂຮງຮຽນນ້ຳແດງໃຕ້ ແຂວງຫຼວງນ້ຳທາ
- ສ້ອມແປງສູນສີມືແຮງງານ ເຂດພາກເໜືອ ແຂວງຫຼວງພະບາງ
- ພັດທະນາ ສູນບໍລິຫານຍຸດທະສາດດ້ານກະສິກຳ ສຳລັບ ສູນຕົວຢ່າງປູກໝາກຖົ່ວລຽນ ແຂວງຈຳປາສັກ
- ສ້າງຫ້ອງສະມຸດໂຮງຮຽນປະຖົມບ້ານ ດົງໂພສີ ນະຄອນຫຼວງວຽງຈັນ

ບຸກຄົນ, ທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນ ທີ່ ມີກິດຈະກຳ ກ່ຽວກັບການພັດທະນາ, ບໍ່ຫວັງຜົນກຳໄລ ແລະ ຂຽນໂຄງການ ໄປຕາມ ຂໍ້ແນະນຳ ຂອງໂຄງການຊ່ວຍເຫຼືອຂະໜາດນ້ອຍນີ້ ແມ່ນ ສາມາດຍື່ນໂຄງການໄດ້.

ແບບຟອມ ແລະ ຂໍ້ແນະນຳຂອງໂຄງການ ເປັນພາສາລາວ ແລະ ພາສາອັງກິດ ແມ່ນ ສາມາດໄປເອົາໄດ້ ຢູ່ ສະຖານທູດ ອົດສະຕຣາລີ ຫຼື ສາມາດ ດາວໂລດ ເອົາໄດ້ ຢູ່ ເວບໄຊ www.laos.embassy.gov.au ກະລຸນາ ສົ່ງເຖິງ ຄະນະກາມະການ ໂຄງການ DAP, ສະຖານທູດອົດສະຕຣາລີ, ນະຄອນຫຼວງວຽງຈັນ. ກະລຸນາສົ່ງ ບົດສະເໜີໂຄງການ ບໍ່ໃຫ້ກາຍ ວັນທີ 12 ກັນຍາ 2013. ຂໍແຈ້ງມາຍັງທ່ານ ຊາບວ່າ ຂັ້ນຕອນໃນການພິຈາລະນາ ແມ່ນ ໃຊ້ເວລາ ດັ່ງນັ້ນ ສະຖານທູດອົດສະຕຣາລີ ຈະບໍ່ໄດ້ພິຈາລະນາໂຄງການ ກ່ອນ ເດືອນ ຕຸລາ 2013.

ອີງຕາມນະໂຍບາຍຂອງລັດຖະບານອົດສະຕຣາລີ ທຸກໂຄງການກໍ່ສ້າງ ໂດຍຜ່ານໂຄງການຊ່ວຍເຫຼືອໂດຍກົງນີ້ ແມ່ນ ຈະຕ້ອງໄດ້ມາດຕະຖານ ແລະ ກາຍມາດຕະຖານ ແລະ ວັດສະດຸກໍ່ສ້າງ ແມ່ນ **ຕ້ອງບໍ່ມີ ສານ ASBESTOS.** ຂໍ້ມູນສາລັບ ສານດັ່ງກ່າວ ແມ່ນ ຢູ່ໃນ ຂໍ້ແນະນາທົ່ວໄປ ຫຼື ກະລຸນາຕິດຕໍ່ ສອບຖາມໄດ້ຢູ່ ສະຖານທູດອົດສະຕຣາລີ.

ສອບຖາມຂໍ້ມູນເພີ່ມເຕີມໄດ້ ທີ່ ສະຖານທູດອົດສະຕຣາລີ ເບີໂທ 021 353 800.